ເລກທີ 86
ວັນທີ 04 FEB 2008

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ຄະນະເລຂາທິການລັດຖະບານ

ເລກທີ 0235
ວັນທີ 30/01/08

ເລກທີ 159 / ຄລບ

ນະຄອນຫຼວງວຽງຈັນ, ວັນທີ 29.1.2008

## ແຈ້ງການ

ຮຽນ : - ທ່ານ ລັດຖະມົນຕີວ່າການ ກະຊວງ ການເງິນ.

- ທ່ານ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ-ການຄ້າ. ✓

ເລື່ອງ : ການເກັບຄ່າຊັກພິເສດ ຂາອອກ ສິນຄ້າປະເພດໄມ້ທ່ອນ, ໄມ້ແປຮູບ ແລະ ໄມ້ເຄື່ອງເຮືອນ ເວລາສົ່ງອອກ ຜ່ານດ່ານພາສີໄປຕ່າງປະເທດ.

- ອີງຕາມໜັງສືສະເໜີສະບັບເລກທີ 2984/ ກງ, ລົງວັນທີ 21 ທັນວາ 2008 ຂອງກະຊວງການເງິນ.

- ອີງຕາມການຕົກລົງ ຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 24-25 ມັງກອນ 2008.

ຄະນະເລຂາທິການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບດັ່ງນີ້: " ໃນດ້ານຫຼັກການ ເຫັນດີໃຫ້ເກັບຄ່າຊັກພິເສດ ຂາອອກ ສິນຄ້າປະເພດໄມ້ທ່ອນ, ໄມ້ແປຮູບ ແລະ ໄມ້ເຄື່ອງເຮືອນ ເວລາສົ່ງອອກ ຜ່ານດ່ານພາສີ ໄປຕ່າງປະເທດ ຖ້າຫາກວ່າໄດ້ຮັບ ອະນຸຍາດ ໃຫ້ສົ່ງອອກຢ່າງຖືກຕ້ອງ ຕາມລະບຽບການ, ສ່ວນອັດຕາການເກັບ ແມ່ນໃຫ້ປະຕິບັດ ຕາມມະຕິຕົກລົງ ເລກທີ 23/ ປສລ, ລົງວັນທີ 18 ເມສາ 1990 ຂອງສະພາລັດຖະມົນຕີ. ໃຫ້ ກະຊວງ ການເງິນ ເອົາໃຈໃສ່ຊີ້ແຈງອະທິບາຍ ໃຫ້ສະມາຄົມ ນັກທຸລະກິດໄມ້ເຂົ້າໃຈ ຢ່າງຄັກແນ່. "

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ແທນ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ

ຫົວໜ້າຄະນະເລຂາທິການລັດຖະບານ

ບ່ອນນຳສົ່ງ :

- ນາຍົກ, ຮອງນາຍົກລັດຖະມົນຕີ 05 ສະບັບ
- ຫ້ອງວ່າການສູນກາງພັກ 01 ສະບັບ
- ກະຊວງ ກະສິກຳ-ປ່າໄມ້ 01 ສະບັບ
- ເກັບມ້ຽນ 08 ສະບັບ

ຄຳພັນ ເຜີຍຍະວົງ

ຄະນະເລຂາທິການລັດຖະບານ ໂທ: 222 362, 213722 ແຟກ: 213650 D PM/VPM 24-25.01.2008